ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ກົມທະບຽນ ແລະຄຸ້ມຄອງວິສາຫະກິດ

ເລກທີ 0927 /ກທຄວ.ອຄ

ນະຄອນຫລວງວຽງຈັນ, ວັນທີ 25 ກໍລະກົດ 2019

ເຖິງ : ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກໍາ ແລະ ການຄ້າ ຂັ້ນແຂວງ
ເຈົ້າໜ້າທີ່ທະບຽນວິສາຫະກິດ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ຂັ້ນເມືອງ

ເລື່ອງ: ການແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການທີ່ມີແຈ້ງການໂຈະການອອກອະນຸຍາດດໍາເນີນທຸລະກິດຈາກພາກສ່ວນ ຫລື ຂະແໜງການກ່ຽວຂ້ອງ

- ອີງຕາມ ຂໍ້ຕົກລົງ, ສະບັບເລກທີ 0023/ອຄ.ກທຄວ, ລົງວັນທີ 09 ມັງກອນ 2019 ວ່າດ້ວຍການຂຶ້ນທະບຽນວິສາຫະກິດ;
- ອີງຕາມ ໜັງສື ຫລື ນິຕິກໍາຕ່າງໆ ກ່ຽວກັບການແຈ້ງໂຈະການອອກອະນຸຍາດດໍາເນີນທຸລະກິດຂອງບັນດາພາກສ່ວນ ຫລື ຂະແໜງການທີ່ກ່ຽວຂ້ອງ.

ເພື່ອໃຫ້ການແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການທີ່ມີແຈ້ງການໂຈະການອອກອະນຸຍາດດໍາເນີນທຸລະກິດ ຈາກພາກສ່ວນ ຫລື ຂະແໜງການກ່ຽວຂ້ອງ ໄດ້ຮັບການຈັດຕັ້ງປະຕິບັດ, ສອດຄ່ອງ ແລະ ເປັນເອກະພາບກັນ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກໍາ ແລະ ການຄ້າ) ແຈ້ງມາຍັງເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ການແຈ້ງຂຶ້ນທະບຽນວິສາຫະກິດ ຂອງຜູ້ລົງທຶນ ທີ່ມີແຕ່ກິດຈະການດຽວ ແລະ ກິດຈະການດັ່ງກ່າວນັ້ນ ໄດ້ຖືກແຈ້ງໂຈະການອອກອະນຸຍາດດໍາເນີນທຸລະກິດ ຈາກພາກສ່ວນ ຫລື ຂະແໜງການກ່ຽວຂ້ອງ ແມ່ນບໍ່ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຂຶ້ນທະບຽນວິສາຫະກິດ ໃຫ້ແກ່ຜູ້ລົງທຶນ;

2. ການແຈ້ງຂຶ້ນທະບຽນວິສາຫະກິດ ຂອງຜູ້ລົງທຶນ ທີ່ມີຫລາຍກິດຈະການ, ໃນນີ້ : ມີບາງກິດຈະການ ເປັນກິດຈະການທີ່ຖືກສັ່ງໂຈະການອອກອະນຸຍາດດໍາເນີນທຸລະກິດ ຈາກພາກສ່ວນ ຫລື ຂະແໜງການກ່ຽວຂ້ອງ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ແນະນໍາໃຫ້ຜູ້ລົງທຶນ ຕັດກິດຈະການດັ່ງກ່າວ ອອກຈາກໃບແຈ້ງລາຍການກິດຈະການທີ່ສະເໜີປະກອບທຸລະກິດກ່ອນ ຈຶ່ງຂຶ້ນທະບຽນວິສາຫະກິດໃຫ້. ຫ້າມບໍ່ໃຫ້ລະບຸກິດຈະການທີ່ຖືກຕັດອອກນັ້ນ ໃນໜັງສືແນະນໍາຢ່າງເດັດຂາດ ;

3. ວິສາຫະກິດ ທີ່ໄດ້ຮັບການຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງມາແລ້ວ ແຕ່ຂໍເພີ່ມກິດຈະການ ທີ່ບໍ່ຈຳເປັນຕ້ອງຂໍອະນຸຍາດດຳເນີນທຸລະກິດ ແລະ ກິດຈະການດັ່ງກ່າວນີ້ ຖືກແຈ້ງໂຈະບໍ່ໃຫ້ຂຶ້ນທະບຽນວິສາຫະກິດ ຈາກພາກສ່ວນ ຫລືຂະແໜງການກ່ຽວຂ້ອງ, ເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງບໍ່ລະບຸກິດຈະການດັ່ງກ່າວ ໃສ່ດ້ານຫລັງໃບທະບຽນວິສາຫະກິດ.

ໃນກໍລະນີ ຊື່ຂອງກິດຈະການ ທີ່ບໍ່ຈຳເປັນຂໍອະນຸຍາດດຳເນີນທຸລະກິດ ມີຄວາມໝາຍກວ້າງ ກວມເອົາຫລາຍລາຍການສິນຄ້າ ແຕ່ໃນລາຍການດັ່ງກ່າວ ມີລາຍການສິນຄ້າໜຶ່ງ ຫລື ບາງສ່ວນ ຖືກແຈ້ງໂຈະການຂຶ້ນທະບຽນວິສາຫະກິດ ຈາກພາກສ່ວນ ຫລື ຂະແໜງການກ່ຽວຂ້ອງ, ເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງລະບຸຄຳວ່າ : ຍົກເວັ້ນລາຍການສິນຄ້າດັ່ງກ່າວ ຕໍ່ໃສ່ທ້າຍຊື່ກິດຈະການໃນໃບທະບຽນວິສາຫະກິດ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າກົມ**

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ດຣ.ສົມພອງ ພຽນພິນິດ